ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---------------000---------------

ກະຊວງສຶກສາທິການ ແລະ ກິລາ

1053

ເລກທີ.........../ສສກ.ນຍ

26 FEB 2016

ນະຄອນຫຼວງວຽງຈັນ, ວັນທີ............

# ຂໍ້ຕົກລົງຂອງລັດຖະມົນຕີ
# ວ່າດ້ວຍການຄຸ້ມຄອງໂຮງຮຽນເອກະຊົນ
# ຂອງການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ

- ອີງຕາມ ກົດໝາຍວ່າດ້ວຍການສຶກສາແຫ່ງ ສ ປປ ລາວ (ສະບັບປັບປຸງ) ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015;
- ອີງຕາມ ດໍາລັດນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງວັນທີ 7 ກັນຍາ 2011;
- ອີງຕາມ ການສະເໜີຂອງກົມມັດທະຍົມສຶກສາ ແລະ ການຄົ້ນຄວ້າຂອງກົມຈັດຕັ້ງ ແລະ ພະນັກງານ.

**ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ**

**ຈຶ່ງຕົກລົງ**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກໍານົດລະບຽບກ່ຽວກັບ ຫຼັກການຄຸ້ມຄອງ, ການສ້າງຕັ້ງ ແລະ ຍຸບເລີກ, ການຂໍຕໍ່ໃບອະນຸມັດ, ການຂະຫຍາຍໂຮງຮຽນສາຂາ, ການນໍາໃຊ້ຫຼັກສູດ, ການຈັດການຮຽນ-ການສອນ ຂອງໂຮງຮຽນເອກະຊົນ ເພື່ອເປັນບ່ອນອີງໃນການຈັດຕັ້ງ ແລະ ເຄື່ອນໄຫວວຽກງານຕ່າງໆໃຫ້ມີປະສິດທິຜົນ, ສອດຄ່ອງກັບກົດໝາຍວ່າດ້ວຍການສຶກສາ ແລະ ລະບຽບການຕ່າງໆຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 2. ຫຼັກການຄຸ້ມຄອງ**

ໂຮງຮຽນເອກະຊົນ ມີຫຼັກການຄຸ້ມຄອງດັ່ງນີ້:

1. ເປັນສະຖານທີ່ຈັດຕັ້ງປະຕິບັດການຮຽນ-ການສອນ ທີ່ນໍາໃຊ້ຫຼັກສູດການສຶກສາແຫ່ງຊາດ;
2. ເປັນສະຖານທີ່ຮັບເອົາເດັກກ່ອນໄວຮຽນ, ນັກຮຽນປະຖົມ ແລະ ມັດທະຍົມສຶກສາ;
3. ໂຮງຮຽນເອກະຊົນທຸກແຫ່ງຕ້ອງມີການຈັດຕັ້ງສະພາໂຮງຮຽນ;
4. ຫຼັກການຄຸ້ມຄອງໂຮງຮຽນເອກະຊົນ ໃຫ້ປະຕິບັດຕາມຫຼັກການຄຸ້ມຄອງຂອງ ການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາທີ່ກໍານົດໄວ້

**ມາດຕາ 3. ອະທິບາຍຄຳສັບ**

**1. ໂຮງຮຽນເອກະຊົນ** ໝາຍເຖິງສະຖານການສຶກສາ ທີ່ບຸກຄົນ, ນິຕິບຸກຄົນສ້າງຕັ້ງຂຶ້ນ ເພື່ອດຳເນີນການຮຽນ - ການສອນ ການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ.

**2. ຜູ້ຮັບອະນຸມັດ** ໝາຍເຖິງ ບຸກຄົນເຊິ່ງໄດ້ຮັບໃບອະນຸມັດ ໃຫ້ສ້າງຕັ້ງໂຮງຮຽນ.

**3. ຜູ້ອະນຸມັດ** ໝາຍເຖິງ ຜູ້ມີສິດໃນການອອກໃບອະນຸມັດ.

**ມາດຕາ 4. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສະເພາະ ການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາຂອງ ໂຮງຮຽນເອກະຊົນ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ການສ້າງຕັ້ງໂຮງຮຽນ

**ມາດຕາ 5. ປະເພດຂອງໂຮງຮຽນ**

ປະເພດຂອງໂຮງຮຽນເອກະຊົນ ປະກອບມີດັ່ງນີ້:

1. ໂຮງຮຽນ ທີ່ມີການຈັດການຮຽນ - ການສອນ ໂດຍນຳໃຊ້ຫຼັກສູດການສຶກສາແຫ່ງຊາດ ແລະ ປະຕິບັດຕາມລະບຽບການສອບເສັງທີ່ ກະຊວງສຶກສາທິການ ແລະ ກິລາ ກຳນົດໄວ້;
2. ໂຮງຮຽນ ທີ່ມີການຈັດການຮຽນ - ການສອນ ສຳລັບນັກຮຽນທີ່ມີຄວາມຕ້ອງການພິເສດ-ພິການ ໂດຍນຳໃຊ້ຫຼັກສູດການສຶກສາແຫ່ງຊາດ ແລະ ປະສົມປະສານກັບຫຼັກສູດທີ່ໄດ້ປັບປຸງໃຫ້ແທດເໝາະກັບສະເພາະກຸ່ມຄົນ ເຊິ່ງໄດ້ຮັບຮອງຈາກ ກະຊວງສຶກສາທິການ ແລະ ກິລາ;
3. ໂຮງຮຽນທີ່ໃຊ້ສອງພາສາ ໂດຍນຳໃຊ້ຫຼັກສູດການສຶກສາແຫ່ງຊາດ ແລະ ຈັດການຮຽນ-ການສອນ ເປັນພາສາຕ່າງປະເທດໃນ ວິຊາຄະນິດສາດ ແລະ ວິທະຍາສາດທຳມະຊາດ.

**ມາດຕາ 6. ການສ້າງຕັ້ງ, ການຂໍຕໍ່ໃບອະນຸມັດ ແລະ ການສ້າງຕັ້ງໂຮງຮຽນສາຂາ**

ການປະກອບເອກະສານມີດັ່ງນີ້:

1. ເອກະສານສຳລັບຜູ້ຂໍອະນຸມັດສ້າງຕັ້ງໂຮງຮຽນ;
2. ເອກະສານດ້ານວິຊາການ ແລະ ການຈັດຕັ້ງ;
3. ເອກະສານກ່ຽວກັບທີ່ດິນ ແລະ ອາຄານ;
4. ເອກະສານຂໍຕໍ່ໃບອະນຸມັດ;
5. ເອກະສານຂໍສ້າງຕັ້ງໂຮງຮຽນສາຂາ;

(ລາຍລະອຽດຂອງເອກະສານຕ່າງໆ ໄດ້ກຳນົດໄວ້ຕ່າງຫາກ).

**ມາດຕາ 7 ການມອບ - ໂອນກຳມະສິດ**

ຜູ້ຮັບອະນຸຍາດສາມາດມອບ-ໂອນໂຮງຮຽນ ໃຫ້ແກ່ບຸກຄົນອື່ນໄດ້ ແຕ່ຕ້ອງໄດ້ຮັບອະນຸມັດເປັນທາງການຈາກ ຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ຕາມລະບຽບທີ່ໄດ້ກຳນົດໄວ້.

**ມາດຕາ 8. ການສືບທອດກຳມະສິດ**

ຖ້າຜູ້ຮັບໃບອະນຸມັດຫາກເສຍຊີວິດ ໃຫ້ຍາດໃກ້ສິດ ຫຼື ຜູ້ທີ່ໄດ້ຮັບມອບໝາຍ ຍື່ນຄຳຮ້ອງ ເພື່ອຮັບໂອນກຳມະສິດ ພາຍໃນ 120 ວັນ ນັບແຕ່ວັນທີ່ຜູ້ຮັບໃບອະນຸມັດ ເສຍຊີວິດ.

ກໍລະນີບໍ່ໄດ້ຍື່ນຄຳຮ້ອງ ພາຍໃນໄລຍະເວລາທີ່ກຳນົດ ຜູ້ອະນຸມັດຈະສັ່ງຖອນໃບອະນຸມັດສ້າງຕັ້ງໂຮງຮຽນໄດ້ໂດຍແຈ້ງເປັນໜັງສືທາງການໃຫ້ຍາດໃກ້ສິດ ຫຼື ຜູ້ໄດ້ຮັບການມອບໝາຍຮັບຊາບ.

## ໝວດທີ 3
## ເງື່ອນໄຂຂອງຜູ້ໄດ້ຮັບອະນຸມັດສ້າງຕັ້ງໂຮງຮຽນ ແລະ ບຸກຄະລະກອນ

**ມາດຕາ 9. ເງື່ອນໄຂຂອງບຸກຄົນຜູ້ໄດ້ຮັບອະນຸມັດ**

ເງື່ອນໄຂຂອງບຸກຄົນຜູ້ໄດ້ຮັບອະນຸມັດສ້າງຕັ້ງໂຮງຮຽນມີດັ່ງນີ້:

1. ມີວຸດທິການສຶກສາລະດັບໃດໜຶ່ງ;
2. ມີຖານະທາງການເງິນທີ່ໄດ້ຮັບການຢັ້ງຢືນຈາກທະນາຄານ ໃນ ສປປ ລາວ;
3. ເປັນຜູ້ທີ່ມີປະຫວັດຈະແຈ້ງ;
4. ບໍ່ເຄີຍຖືກຖອນໃບອະນຸຍາດສ້າງຕັ້ງໂຮງຮຽນ ເວັ້ນແຕ່ໄດ້ຖືກຖອນໃບອະນຸຍາດດັ່ງກ່າວມາແລ້ວ ເວລາ 3 ປີ ກ່ອນວັນຂໍຮັບໃບອະນຸມັດໃຫ້ສ້າງຕັ້ງໂຮງຮຽນ.

**ມາດຕາ 10. ເງື່ອນໄຂຂອງນິຕິບຸກຄົນຜູ້ໄດ້ຮັບອະນຸມັດ**

ເງື່ອນໄຂຂອງນິຕິບຸກຄົນຜູ້ໄດ້ຮັບອະນຸມັດ ມີດັ່ງນີ້:

1. ມີວັດຖຸປະສົງເພື່ອສົ່ງເສີມການສຶກສາ;
2. ມີຊັບສິນ ແລະ ຖານະດ້ານການເງິນພຽງພໍທີ່ຈະສ້າງຕັ້ງ ແລະ ດຳເນີນການບໍລິຫານໂຮງຮຽນໄດ້ຕາມ ລະບຽບຫຼັກການຂອງການລົງທຶນໃນ ສປປ ລາວ;
3. ນິຕິບຸກຄົນ ທີ່ເປັນບໍລິສັດຈຳກັດ ຫຼື ບໍລິສັດຫຸ້ນສ່ວນ ຈະຕ້ອງມີທຶນ ຫຼື ຈຳນວນຫຸ້ນ ເປັນຂອງຜູ້ຖືຫຸ້ນ ຫຼື ຜູ້ເປັນຫຸ້ນສ່ວນທີ່ມີສັນຊາດລາວ ຕ້ອງບໍ່ຫຼຸດ 30% ຂອງຈຳນວນເງິນທຶນ ຫຼື ຈຳນວນຫຸ້ນທັງໝົດ ແລະ ຈະຕ້ອງມີຈຳນວນຜູ້ຖືຫຸ້ນ ຫຼື ຜູ້ເປັນຫຸ້ນສ່ວນ ທີ່ມີສັນຊາດລາວບໍ່ໜ້ອຍກ່ວາ 50% ຂອງຈຳນວນຜູ້ຖືຫຸ້ນ ຫຼື ຜູ້ເປັນຫຸ້ນສ່ວນທັງໝົດ;
4. ນິຕິບຸກຄົນທີ່ເປັນມູນນິທິ ຈະຕ້ອງມີກຳມະການມູນນິທິ ທີ່ມີສັນຊາດລາວ 60% ຂຶ້ນໄປ ຂອງຈຳນວນກຳມະການບໍລິຫານທັງໝົດ;
5. ນິຕິບຸກຄົນທີ່ເປັນສະມາຄົມ ຈະຕ້ອງມີກຳມະການ ທີ່ມີສັນຊາດລາວ 60% ຂອງຈຳນວນກຳມະການທັງໝົດ ແລະ ສະມາຊິກ ຂອງສະມາຄົມ ຕ້ອງມີສັນຊາດລາວ 60% ຂອງຈຳນວນທັງໝົດ; ຜູ້ອຳນວຍການຝ່າຍບໍລິຫານຂອງນິຕິບຸກຄົນ ຫຼື ຜູ້ຕາງໜ້າຂອງນິຕິບຸກຄົນນັ້ນຕ້ອງມີເງື່ອນໄຂ ຕາມ ມາດຕາ 9.

## ໝວດທີ 4
## ການຄຸ້ມຄອງໂຮງຮຽນເອກະຊົນ

**ມາດຕາ 11 ການຄຸ້ມຄອງໂຮງຮຽນເອກະຊົນ**

ການຄຸ້ມຄອງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງໂຮງຮຽນ, ໂຄງປະກອບກົງຈັກການຈັດຕັ້ງ, ສິດ ແລະ ໜ້າທີ່ຂອງຄະນະອຳນວຍການໂຮງຮຽນເອກະຊົນໃຫ້ປະຕິບັດຕາມຫຼັກການຄຸ້ມຄອງການສຶກສາກ່ອນໄວຮຽນ, ໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມ ທີ່ ກະຊວງສຶກສາທິການ ແລະ ກິລາ ກຳນົດໄວ້.

**ມາດຕາ 12. ການປ່ຽນແທນຕຳແໜ່ງຜູ້ອຳນວຍການໂຮງຮຽນ**

ການປ່ຽນແທນຕຳແໜ່ງຜູ້ອຳນວຍການໂຮງຮຽນ ໃນກໍລະນີດັ່ງນີ້:

1. ເສຍຊີວິດ;
2. ລາອອກ;
3. ເປັນບຸກຄົນລົ້ມລະລາຍ;
4. ຂາດຄວາມສາມາດທາງດ້ານການບໍລິຫານ;
5. ໄດ້ຮັບໂທດຕັດອິດສະຫຼະພາບ;
6. ຖືກໄລ່ອອກ ເນື່ອງຈາກມີຄວາມປະພຶດທີ່ເສື່ອມເສຍທາງດ້ານສິນລະທຳ ແລະ ຄຸນນະທຳ;
7. ກໍລະນີຜູ້ອຳນວຍການໂຮງຮຽນ ພົ້ນຈາກຕຳແໜ່ງດ້ວຍເຫດຜົນໃດໜຶ່ງ ໃຫ້ຜູ້ຮັບອະນຸມັດສ້າງຕັ້ງໂຮງຮຽນ ສະເໜີແຕ່ງຕັ້ງບຸກຄົນອື່ນຂຶ້ນແທນ;
8. ການປ່ຽນແທນຜູ້ອຳນວຍການ ໃນໂຮງຮຽນໃດໜຶ່ງ ຕ້ອງມີໜັງສືທາງການຈາກຜູ້ອະນຸມັດ.

**ມາດຕາ 13. ການແຕ່ງຕັ້ງຄະນະອຳນວຍການໂຮງຮຽນ**

ໃຫ້ຜູ້ຮັບອະນຸມັດ ສະເໜີ ຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ແຕ່ງຕັ້ງຜູ້ອຳນວຍການໂຮງຮຽນ 1 ທ່ານ ແລະ ຮອງຜູ້ອຳນວຍການໂຮງຮຽນ 1-2 ທ່ານ.

**ມາດຕາ 14. ການບັນຈຸ ແລະ ການປ່ຽນແທນຄູ**

ໃຫ້ຜູ້ຮັບອະນຸມັດບັນຈຸຄູສອນປະຈຳ ຢູ່ໃນໂຮງຮຽນໃຫ້ໄດ້ມາດຕະຖານດັ່ງນີ້:

1. ການສຶກສາກ່ອນໄວຮຽນ ແລະ ປະຖົມສຶກສາ ໃຫ້ບັນຈຸຄູປະຈຳ 100 %;
2. ຊັ້ນມັດທະຍົມສຶກສາ ໃຫ້ບັນຈຸຄູປະຈຳ 80 %;
3. ການປ່ຽນແທນຄູ ໃນໂຮງຮຽນໃດໜຶ່ງ ຕ້ອງມີໜັງສືທາງການຈາກຜູ້ອະນຸມັດ.

**ມາດຕາ 15. ຂັ້ນຕອນການບັນຈຸຄູ**

ຂັ້ນຕອນການບັນຈຸຄູ ມີດັ່ງນີ້:

1. ການບັນຈຸຄູ ເຂົ້າເປັນຄູສອນໃນໂຮງຮຽນ ໃຫ້ປະກອບເອກະສານເພື່ອຂໍອະນຸມັດຕໍ່ ຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ເປັນຜູ້ອະນຸມັດ ຕາມລະບຽບການ.

2. ໂຮງຮຽນມີສິດເຊີນຄູຈາກພາກສ່ວນອື່ນ ມາເປັນຄູຮັບເຊີນພາຍໃນ ແຕ່ຕ້ອງໄດ້ຮັບອະນຸມັດຈາກການຈັດຕັ້ງທີ່ກ່ຽວ ຂ້ອງຕາມລໍາດັບ; ຈໍານວນຄູສອນຮັບເຊີນຕ້ອງບໍ່ເກີນ 1 ສ່ວນ 5 ຂອງຄູສອນທັງໝົດພາຍໃນໂຮງຮຽນ.

**ມາດຕາ 16. ມາດຕະຖານຂອງຜູ້ອໍານວຍການ**

ມາດຕະຖານຂອງຜູ້ອໍານວຍການ ມີດັ່ງນີ້:

1. ຜູ້ອໍານວຍການໂຮງຮຽນການສຶກສາກ່ອນໄວຮຽນ ແລະ ປະຖົມສຶກສາ ຕ້ອງມີວຸດທິບັດຄູ ຊັ້ນສູງ ຫຼື ທຽບເທົ່າຂຶ້ນໄປ, ມີປະກາສະນິຍະບັດ ຫຼື ໃບຢັ້ງຢືນວິຊາຄູ ຫຼື ໃບອະນຸ ຍາດການສອນ ແລະ ມີສຸຂະພາບແຂງແຮງດີ;
2. ຜູ້ອໍານວຍການໂຮງຮຽນ ມັດທະຍົມສຶກສາ ຕ້ອງມີວຸດທິບັດຄູ ປະລິນຍາຕີ ຫຼື ທຽບເທົ່າຂຶ້ນໄປ, ມີປະກາສະນິຍະບັດ ຫຼື ໃບຢັ້ງຢືນວິຊາຄູ ຫຼື ໃບອະນຸຍາດການສອນ ແລະ ມີສຸຂະພາບແຂງແຮງດີ;
3. ຜູ້ອໍານວຍການໂຮງຮຽນແຕ່ລະຊັ້ນຮຽນ ຕ້ອງໄດ້ຜ່ານການຝຶກອົບຮົມກ່ຽວກັບວຽກງານບໍລິຫານການສຶກສາ.

**ມາດຕາ 17. ມາດຕະຖານຂອງຄູ**

ມາດຕະຖານຂອງຄູ ມີດັ່ງນີ້:

**1. ສະຖານການສຶກສາກ່ອນໄວຮຽນ**

ຄູຕ້ອງມີວຸດທິບັດຄູອະນຸບານ ຊັ້ນກາງ ຫຼື ທຽບເທົ່າຂຶ້ນໄປ, ມີປະກາສະນິຍະບັດ ຫຼື ໃບຢັ້ງຢືນວິຊາຄູ ຫຼື ໃບອະນຸຍາດການສອນ ແລະ ມີສຸຂະພາບແຂງແຮງດີ.

**2. ສະຖານການສຶກສາ ສາມັນ**

**1) ຄູທີ່ສອນຊັ້ນປະຖົມສຶກສາ**

ຄູຕ້ອງມີວຸດທິບັດຄູປະຖົມ ຊັ້ນກາງ ຫຼື ທຽບເທົ່າຂຶ້ນໄປ, ມີປະກາສະນິຍະບັດ ຫຼື ໃບຢັ້ງຢືນວິຊາຄູ ຫຼືໃບອະຍຸຍາດການສອນ ແລະ ມີສຸຂະພາບແຂງແຮງດີ.

**2) ຄູຊັ້ນມັດທະຍົມສຶກສາ**

- **ຄູຊັ້ນມັດທະຍົມສຶກສາຕອນຕົ້ນ**ຕ້ອງມີວຸດທິບັດຄູມັດທະຍົມ ຊັ້ນສູງ ຫຼື ທຽບເທົ່າຂຶ້ນໄປ, ມີປະກາສະນິຍະບັດ ຫຼື ໃບຢັ້ງຢືນວິຊາຄູ ຫຼື ໃບອະຍຸຍາດການສອນ ແລະ ມີສຸຂະພາບແຂງແຮງດີ;
- **ຄູຊັ້ນມັດທະຍົມສຶກສາຕອນປາຍ**ຕ້ອງມີວຸດທິບັດຄູມັດທະຍົມ ປະລິນຍາຕີ ຫຼື ທຽບເທົ່າຂຶ້ນໄປ, ມີປະກາສະນິຍະບັດ ຫຼື ໃບຢັ້ງຢືນວິຊາຄູ ຫຼື ໃບອະຍຸຍາດການສອນ ແລະ ມີສຸຂະພາບແຂງແຮງດີ;

3) ຖ້າເປັນຄົນຕ່າງປະເທດ ຕ້ອງມີວຸດທິບັດຄູ ແລະ ໄດ້ຮັບການອະນຸຍາດໃນການສອນ ຈາກກະຊວງສຶກສາທິການ ແລະ ກິລາ.

**ມາດຕາ 18. ການປະຕິບັດແຜນການເຄື່ອນໄຫວປີຮຽນ**

ການປະຕິບັດຫຼັກສູດ, ການຈັດການຮຽນ - ການສອນ, ການເລື່ອນຂັ້ນ, ການສອບເສັງ ແລະ ການເຄື່ອນໄຫວນອກຫຼັກສູດ ໃຫ້ປະຕິບັດຕາມຄໍາສັ່ງແນະນໍາຂອງ ກະຊວງສຶກສາທິການ ແລະ ກິລາ ໃນແຕ່ລະສົກຮຽນ.

**ມາດຕາ 19. ການກໍານົດຊື່ ແລະ ປ້າຍໂຮງຮຽນ**

ຜູ້ຮັບອະນຸມັດ ຕ້ອງຕິດປ້າຍຊື່ໂຮງຮຽນ ໃສ່ທາງໜ້າປະຕູທາງເຂົ້າໂຮງຮຽນ, ລັກສະນະຂອງປ້າຍຕ້ອງເປັນພື້ນສີຟ້າ ໂຕໜັງສືສີຂາວ, ໃຫ້ຂຽນຊື່ເປັນພາສາລາວ ຕາມມາດຕະຖານທີ່ ກະຊວງສຶກສາທິການ ແລະ ກິລາ ກໍານົດ. ສໍາລັບຊື່ຂອງສະຖານການສຶກສາໃຫ້ປະຕິບັດດັ່ງນີ້:

1. **ສະຖານການສຶກສາກ່ອນໄວຮຽນ:**

    1) ໂຮງລ້ຽງເດັກ ................

    2) ໂຮງຮຽນອະນຸບານ...................

    3) ໂຮງລ້ຽງເດັກ ແລະ ໂຮງຮຽນອະນຸບານ...............

2. **ສະຖານການສຶກສາສາມັນ:**

    1) ໂຮງຮຽນປະຖົມສົມບູນ ...................

    2) ໂຮງຮຽນມັດທະຍົມຕອນຕົ້ນ .................

    3) ໂຮງຮຽນມັດທະຍົມຕອນປາຍ ....................

    4)ໂຮງຮຽນມັດທະຍົມສົມບູນ.........................

## ໝວດທີ 5
## ຄ່າທໍານຽມ

**ມາດຕາ 20. ຄ່າທານຽມການຮຽນ**

ຄ່າທໍານຽມການຮຽນແມ່ນ ຄ່າໃຊ້ຈ່າຍ ທີ່ໂຮງຮຽນເກັບຈາກຜູ້ປົກຄອງນັກຮຽນ ເພື່ອເປັນຄ່າລົງທະບຽນ ແລະ ຄ່າຮຽນ.

ນອກນັ້ນ ຍັງມີຄ່າໃຊ້ຈ່າຍທີ່ທາງໂຮງຮຽນເກັບຈາກຜູ້ປົກຄອງນັກຮຽນ ເພື່ອເປັນຄ່າຈັດກິດຈະກໍາ ແລະ ຄ່າບໍລິການອື່ນໆ.

**ມາດຕາ 21. ການເກັບຄ່າທໍານຽມການຮຽນ**

ການເກັບຄ່າທໍານຽມການຮຽນ ໃຫ້ປະຕິບັດຕາມເງື່ອນໄຂທີ່ກໍານົດໄວ້ໃນກົດໝາຍການລົງທຶນ, ນະໂຍບາຍ ແລະ ລະບຽບການ ຂອງກະຊວງສຶກສາທິການ ແລະ ກິລາ.

## ໝວດທີ 6
## ຂໍ້ຫ້າມ

### ມາດຕາ 22. ຂໍ້ຫ້າມສຳລັບຜູ່ໄດ້ຮັບອະນຸມັດ

ຂໍ້ຫ້າມສຳລັບຜູ່ໄດ້ຮັບອະນຸມັດ ມີດັ່ງນີ້:

1. ຫ້າມຜູ່ຮັບອະນຸມັດກະທຳໃດໆໃນລັກສະນະເປັນຕົວແທນ ຫຼື ສາຂາຂອງສະຖາບັນ ຫຼື ສະຖານສຶກສາໃນຕ່າງປະເທດ ເວັ້ນແຕ່ໄດ້ຮັບອະນຸມັດ ເປັນໜັງສືທາງການຈາກກະຊວງສຶກສາທິການ ແລະ ກິລາ;
2. ຫ້າມຜູ່ຮັບອະນຸມັດໂຄສະນາ ຫຼື ໃຫ້ຜູ່ອື່ນໂຄສະນາ ຊວນເຊື່ອ ກິດຈະກຳຂອງໂຮງຮຽນໃນລັກສະນະໂອ້ອວດເກີນຄວາມຈິງ ຫຼື ໃນລັກສະນະທີ່ສະແດງວ່າ ໂຮງຮຽນຂອງຕົນເປັນຕົວແທນ ຫຼື ສາຂາຂອງສະຖາບັນ ຫຼື ສະຖານການສຶກສາໃນຕ່າງປະເທດ ທີ່ບໍ່ມີມູນຄວາມຈິງ ;
3. ຫ້າມຜູ່ຮັບອະນຸມັດ ນຳໃຊ້ ຫຼື ໃຫ້ບຸກຄົນອື່ນ ນຳໃຊ້ ສະຖານທີ່ ຫຼື ບໍລິເວນໂຮງຮຽນ ຈັດການສອນ ຫຼື ຊຸມນຸມ ທີ່ຂັດກັບລະບຽບກົດໝາຍ ແລະ ເປັນໄພຕໍ່ຄວາມໝັ້ນຄົງຂອງຊາດ ;
4. ຫ້າມມີພຶດຕິກຳອື່ນໆ ທີ່ເປັນການລະເມີດຕໍ່ກົດໝາຍ ແລະ ລະບຽບການ.

### ມາດຕາ 23. ຂໍ້ຫ້າມສຳລັບການສ້າງຕັ້ງໂຮງຮຽນ

ຂໍ້ຫ້າມສາລັບການສ້າງຕັ້ງໂຮງຮຽນ ມີດັ່ງນີ້:

1. ຫ້າມຕັ້ງໂຮງຮຽນ ທີ່ມີຫຼາຍຊັ້ນຮຽນໃນສະຖານທີ່ດຽວກັນ, ຖ້າເປັນໂຮງຮຽນທີ່ມີເນື້ອທີ່ດິນຕອນດຽວກັນໃຫ້ເຮັດຮົ້ວຂັ້ນ ແລະ ໃສ່ຊື່ໂຮງຮຽນຕາມ ມາດຕາ 19 .
2. ຫ້າມເປີດການຮຽນ-ການສອນ ກ່ອນໄດ້ຮັບການອະນຸມັດສ້າງຕັ້ງ

## ໝວດທີ 7
## ບົດບັນຍັດສຸດທ້າຍ

### ມາດຕາ 25. ຕາປະທັບ

ໂຮງຮຽນເອກະຊົນທຸກແຫ່ງ ມີຕາປະທັບເພື່ອຮັບໃຊ້ວຽກງານທາງລັດຖະການ .

### ມາດຕາ 26. ການຜັນຂະຫຍາຍ

1. ກົມອະນຸບານ ແລະ ປະຖົມສຶກສາ, ກົມມັດທະຍົມສຶກສາ, ພະແນກສຶກສາທິການ ແລະ ກິລາແຂວງ ,ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນທົ່ວປະເທດ ຈັດຕັ້ງເຜີຍແຜ່ໃຫ້ຄູ-ອາຈານ, ນັກຮຽນ, ອຳນາດການປົກຄອງທ້ອງຖິ່ນ , ພໍ່ແມ່ຜູ່ປົກຄອງ ແລະ ສັງຄົມຮັບຊາບຢ່າງທົ່ວເຖິງ.
2. ໂຮງຮຽນເອກະຊົນທຸກແຫ່ງນຳເອົາເນື້ອໃນຂອງຂໍ້ຕົກລົງສະບັບນີ້ໄປຜັນຂະຫຍາຍເຂົ້າໃນວຽກງານຕົວຈິງ.

ໃນທົ່ວປະເທດ ຈັດຕັ້ງເຜີຍແຜ່ໃຫ້ຄູ-ອາຈານ, ນັກຮຽນ, ອຳນາດການປົກຄອງທ້ອງຖິ່ນ, ພໍ່ແມ່ຜູ້ປົກຄອງ ແລະ ສັງຄົມຮັບຊາບຢ່າງທົ່ວເຖິງ.

ໂຮງຮຽນເອກະຊົນທຸກແຫ່ງ ນຳເອົາເນື້ອໃນຂອງຂໍ້ຕົກລົງສະບັບນີ້ ໄປຜັນຂະຫຍາຍເຂົ້າໃນວຽກງານຕົວຈິງ.

**ມາດຕາ 27. ການຈັດຕັ້ງປະຕິບັດ**

ໃຫ້ໂຮງຮຽນເອກະຊົນທຸກແຫ່ງ ລາຍງານການຈັດຕັ້ງປະຕິບັດວຽກງານຕ່າງໆໃຫ້ຂັ້ນເທິງຮັບຊາບຢ່າງເປັນປົກກະຕິ. ໃນກໍລະນີ ເກີດໄພອັນຕະລາຍ ຫຼື ເຫດການອັນກະທົບກະເທືອນ ຕໍ່ການຈັດການຮຽນ-ການສອນ ຫຼື ມີຜົນກະທົບຕໍ່ ສຸຂະພາບຂອງນັກຮຽນ ແລະ ອື່ນໆ ໃຫ້ລາຍງານເຫດການດັ່ງກ່າວນັ້ນຢ່າງທັນການ;

ໃຫ້ຫ້ອງການກະຊວງ, ບັນດາກົມ, ສູນ, ສະຖາບັນການສຶກສາ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ເຫດສະບານ ແລະ ພາກສ່ວນທີ່ມີໜ້າທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ໄດ້ຮັບຜົນດີ.

**ມາດຕາ 28. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຂໍ້ຕົກລົງ ແລະ ລະບຽບຫຼັກການຕ່າງໆທີ່ອອກໃນເມື່ອກ່ອນ ເຊິ່ງຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ, ຍົກເວັ້ນໂຮງຮຽນເອກະຊົນນານາຊາດທີ່ໄດ້ຮັບອະນຸມັດກ່ອນຂໍ້ຕົກລົງສະບັບນີ້ ໃຫ້ດຳເນີນໄປຈົນກວ່າໝົດອາຍຸອະນຸມັດ.

ທ, ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

**ບ່ອນສົ່ງ:**

1. ຫ້ອງການ, ບັນດາກົມ, ສະຖາບັນ, ສູນທີ່ຂຶ້ນກັບ ບ່ອນລະ1 ສະບັບ
2. ພະແນກສຶກສາທິການແລະກິລານະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ບ່ອນລະ 1 ສະບັບ
3. ໂຮງຮຽນມັດທະຍົມທຸກແຫ່ງ ທັງພາກລັດ ແລະ ເອກະຊົນນາໆຊາດ, ບ່ອນລະ 1 ສະບັບ
4. ເກັບມ້ຽນ 4 ສະບັບ

ບ.ແສງເດືອນ ຫຼ້າຈັນທະບູນ